ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----====oOo====-----

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 3919 /ກປ

ນະຄອນຫຼວງວຽງຈັນ,ວັນທີ 12 DEC 2012

# ຂໍ້ຕົກລົງ
# ຂອງລັດຖະມົນຕີ
# ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ແນວພັນພືດ

- ອີງຕາມ ກົດໝາຍວ່າດ້ວຍ ກະສິກຳ, ສະບັບເລກທີ 01/98ສພຊ, ລົງວັນທີ 10/10/1998;
- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ, ສະບັບເລກທີ 06/ສພຊ, ລົງວັນທີ 9/10/2008;
- ອີງຕາມ ກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາສະບັບປັບປຸງ, ສະບັບເລກທີ01/ສພຊ, ລົງວັນທີ20 ທັນວາ 2011;

## ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້
## ອອກຂໍ້ຕົກລົງ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ກ່ຽວກັບການອະນຸລັກ, ການຄົ້ນຄວ້າທົດລອງ, ການຂະຫຍາຍ, ການຮັບຮອງ, ການຈົດທະບຽນ, ການຜະລິດ ແລະ ດຳເນີນທຸລະກິດແນວພັນພືດ ແນໃສ່ຄຸ້ມຄອງ, ຍົກລະດັບການຜະລິດພືດໃຫ້ມີປະສິດທິຜົນສູງ ຮັບປະກັນທາງດ້ານສະບຽງອາຫານຢ່າງໝັກແໜ້ນ, ການຜະລິດເປັນສິນຄ້າ ແລະຮ່ວມມືສາກົນ.

**ມາດຕາ 2. ແນວພັນພືດ**

ແນວພັນພືດ ແມ່ນກຸ່ມໜຶ່ງຂອງພືດທີ່ມີກຳມະພັນ ແລະ ລັກສະນະທາງພຶກສາສາດທີ່ຄືກັນ, ມີຄຸນສົມບັດສະເພາະຕົວຂອງແຕ່ລະກຸ່ມ, ມີຄວາມແຕກຕ່າງຈາກກຸ່ມອື່ນໃນພືດຊະນິດດຽວກັນ, ມີຄວາມສະໝ່ຳສະເໝີ ແລະມີຄວາມຄົງຕົວ ທາງດ້ານກາຍຍະພາບ ທີ່ໄດ້ມາຈາກ ແນວພັນພື້ນເມືອງ, ແນວພັນທ້ອງຖິ່ນ, ແນວພັນປັບປຸງ, ແນວພັນໄດ້ຈາກການປະສົມພັນ ແລະ ສ່ວນຂະຫຍາຍພັນ.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ແນວພັນພືດພື້ນເມືອງ** ໝາຍເຖິງແນວພັນພືດທີ່ໄດ້ກຳເນີດ ຫຼືມີຢູ່ພາຍໃນປະເທດ ເຊິ່ງມີການນຳໃຊ້ຢ່າງແຜ່ຫຼາຍ.
2. **ແນວພັນພືດທ້ອງຖິ່ນ** ໝາຍເຖິງແນວພັນພືດທີ່ມີລັກສະນະສະເພາະ ແລະມີຄຸນປະໂຫຍດໃນການນຳໃຊ້ ສະເພາະພື້ນທີ່ໃດໜຶ່ງ.
3. **ແນວພັນພືດປ່າ** ໝາຍເຖິງແນວພັນພືດທີ່ມີ ຫຼືເຄີຍມີຢູ່ໃນທຳມະຊາດ ແລະຍັງບໍ່ໄດ້ນຳມາໃຊ້ເພາະປູກຢ່າງແຜ່ຫຼາຍ.
4. **ແນວພັນປັບປຸງ ໝາຍເຖິງ** ແນວພັນທີ່ໄດ້ຈາກການປະສົມພັນ, ຄັດເລືອກ, ການສ້າງ ແລະ ການທົດສອບ,
5. **ຊິ້ນສ່ວນຂະຫຍາຍພັນ** ໝາຍເຖິງ ຕົ້ນ, ຕໍ, ໜໍ່, ກິ່ງ, ງ່າ, ແໜງ, ຕາ, ຍອດ, ຮາກ, ຫົວ, ໃບ ແລະຈຸລັງພືດ
6. **ແນວພັນພືດໃໝ່** ໝາຍເຖິງແນວພັນພືດທີ່ໄດ້ຈາກການປັບປຸງ ຫຼືພັດທະນາພັນພືດ ດ້ວຍການຄັດເລືອກ, ການປະສົມພັນ ແລະ ນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ທີ່ຖືກຢັ້ງຢືນ ຍົກເວັ້ນການຕັດແຕ່ງພັນທຸກຳ (GMO-Genetically Modified Organism)
7. **ການທົດສອບແນວພັນພືດໃໝ່** ໝາຍເຖິງ ການກວດສອບຄວາມແຕກຕ່າງ, ຄວາມສະໝ່ຳສະເໝີ ແລະ ຄວາມຄົງຕົວ; ພ້ອມທັງການກຳນົດຊື່.
8. **ການຮັບຮອງແນວພັນພືດ** ໝາຍເຖິງການຢັ້ງຢືນແນວພັນພືດທີ່ໄດ້ຜ່ານການກວດສອບຄວາມແຕກຕ່າງ, ຄວາມສະໝ່ຳສະເໝີ ແລະ ຄວາມຄົງຕົວ; ພ້ອມທັງຄວາມສາມາດປັບຕົວກັບສະພາບພື້ນທີ່, ທົນທານຕໍ່ພະຍາດແມງໄມ້ ແລະ ເປັນທີ່ຍອມຮັບຂອງສັງຄົມ.
9. **ການຈົດທະບຽນແນວພັນພືດ** ໝາຍເຖິງການຂຶ້ນບັນຊີແນວພັນພືດທີ່ໄດ້ຜ່ານການຢັ້ງຢືນພິຈາລະນາທາງດ້ານວິຊາການກ່ຽວກັບແນວພັນພືດ ແລະ ແຈ້ງຈຸດພິເສດຂອງມັນ.
10. **ການອະນຸລັກແຫຼ່ງເຊື້ອພັນພືດ** ໝາຍເຖິງການເກັບຮັກສາເຊື້ອພັນພືດແຕ່ລະຊະນິດໃວ້ໃນທະນາຄານເຊື້ອພັນ ແລະໃວ້ໃນທ້ອງຖິ່ນເດີມ.
11. **ການຜະລິດແນວພັນພືດ** ໝາຍເຖິງການຜະລິດແນວພັນໄປຕາມຫຼັກການ, ຂັ້ນຕອນ ແລະວິທີການຜະລິດຢ່າງເປັນລະບົບ.
12. **ທະນາຄານເຊື້ອພັນພືດ** ໝາຍເຖິງສະຖານທີ່ເກັບຮັກສາເຊື້ອພັນພືດ
13. **ແນວພັນພືດປອມ** ໝາຍເຖິງແນວພັນພືດທີ່ບໍ່ໄດ້ມາດຕະຖານທີ່ກຳນົດໃວ້ຕາມຫຼັກວິຊາການ.
14. **ກຳມະພັນ ໝາຍເຖິງ** ແມ່ນການຖ່າຍທອດລັກສະນະຕ່າງໆ ຈາກພໍ່ແມ່ ຫຼື ຜູ້ໃຫ້ກຳເນີດ ໄປສູ່ລູກໂດຍມີຍີນເປັນໂຕຄວບຄຸມພັນທຸກຳ ຂອງສິ່ງທີ່ມີຊີວິດແຕ່ລະຊະນິດທີ່ມີຄວາມແຕກຕ່າງກັນ.
15. **ພືກສາສາດ ໝາຍເຖິງ** ໂຄງສ້າງຂອງພືດ, ການຈະເລີນເຕີບໂຕຂອງພືດ ແລະ ຜົນຜະລິດຂອງພືດ

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບ ການອະນຸລັກ, ການຄົ້ນຄວ້າທົດລອງ, ການຂະຫຍາຍ, ການຮັບຮອງ, ການຈົດທະບຽນ, ການຜະລິດ ແລະ ດຳເນີນທຸລະກິດແນວພັນພືດ.

**ມາດຕາ 5. ນະໂຍບາຍກ່ຽວກັບການຄຸ້ມຄອງແນວພັນພືດ**

ລັດຊຸກຍູ້, ສົ່ງເສີມ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃນການລົງທຶນໃສ່ວຽກງານພັດທະນາ ແລະ ຄຸ້ມຄອງແນວພັນພືດແບບວິທະຍາສາດ ໂດຍເນັ້ນໃສ່ກໍ່ສ້າງພື້ນຖານໂຄງລ່າງວັດຖຸເຕັກນິກ, ບຸກຄະລາ

ກອນ, ການຄົ້ນຄວ້າ ແລະ ພັດທະນາແນວພັນ, ການຜະລິດແນວພັນ, ອະນຸລັກພໍ່ແມ່ພັນ, ສໍາຫຼວດ, ເຕົ້າໂຮມ ພ້ອມທັງອະນຸລັກ ແນວພັນພືດທີ່ຫາຍາກ ແລະ ໃກ້ຈະສູນພັນ ຫຼື ວຽກງານອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 6. ຫຼັກການຄຸ້ມຄອງ ແລະ ການນໍາໃຊ້ ແນວພັນພືດ**

ຫຼັກການຄຸ້ມຄອງແນວພັນພືດມີດັ່ງນີ້:

1. ຮັບປະກັນການຄຸ້ມຄອງ ແລະ ນໍາໃຊ້ ແນວພັນພືດ ຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ, ນໍາໃຊ້ແນວພັນພືດໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ມີປະສິດທິຜົນ, ຍືນຍົງ ແລະບໍ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ,
2. ອະນຸລັກ, ປົກປັກຮັກສາ, ພັດທະນາ, ຄຸ້ມຄອງ ແລະ ກວດກາ ແນວພັນພືດໃຫ້ສອດຄ່ອງກັບສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
3. ຮັບປະກັນຜົນປະໂຫຍດຂອງລັດ, ລວມໝູ່, ຄອບຄົວ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ

**ມາດຕາ 7. ການຮ່ວມມືກັບສາກົນ**

ລັດຊຸກຍູ້ສົ່ງເສີມພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະອົງການຈັດຕັ້ງສາກົນໃນວຽກງານຄຸ້ມຄອງແນວພັນພືດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການຍົກລະດັບວິຊາການ, ການເຂົ້າຮ່ວມ ແລະ ປະຕິບັດສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການພັດທະນາແນວພັນພືດ

**ມາດຕາ 8. ເປົ້າໝາຍ**

ເພື່ອສົ່ງເສີມການຄຸ້ມຄອງການຜະລິດແນວພັນພືດ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ຕອບສະໜອງໃຫ້ແກ່ສັງຄົມຢ່າງທົ່ວເຖິງ

**ມາດຕາ 9. ຂັ້ນຕອນຄຸ້ມຄອງການພັດທະນາແນວພັນພືດ**

- ການຄົ້ນຄວ້າ ແລະ ການຜະລິດແນວພັນພືດໃໝ່
- ການຮັບຮອງແນວພັນພືດໃໝ່
- ການຈົດທະບຽນແນວພັນພືດໃໝ່
- ການກວດກາຄຸນນະພາບແນວພັນພືດ

### ໝວດທີ 1
### ການຄົ້ນຄວ້າ ແລະ ການຜະລິດແນວພັນພືດໃໝ່

**ມາດຕາ 10. ການຄົ້ນຄວ້າທົດລອງແນວພັນພືດໃໝ່**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ມີສິດເຮັດການຄົ້ນ ຄວ້າທົດລອງ, ຄັດເລືອກ, ທົດສອບ, ສຶກສາ, ສ້າງ ແລະ ຜະລິດແນວພັນພືດ ຢູ່ ສປປ ລາວ.

**ມາດຕາ 11. ການທົດສອບແນວພັນພືດໃໝ່**

1. ແນວພັນພືດທີ່ຜ່ານການຄັດເລືອກ, ປັບປຸງ ຫຼືນຳເຂົ້າທີ່ຍັງບໍ່ທັນມີຊື່ໃນບັນຊີແນວພັນພືດອະນຸຍາດໃຫ້ຜະລິດ ເພື່ອດຳເນີນທຸລະກິດຈະຕ້ອງໄດ້ຜ່ານການທົດສອບ ແລະ ຖືກຮັບຮອງເສຍກ່ອນຈຶ່ງສາມາດບັນທຶກເຂົ້າໃນບັນຊີແນວພັນພືດໃໝ່;
2. **ເນື້ອໃນການທົດສອບ**
   - ທົດສອບຄວາມແຕກຕ່າງ, ຄວາມສະໝ່ຳສະເໝີ ແລະ ຄວາມຄົງຕົວ (DUS-Distinctness, Uniformity and Stability);
   - ຄຸນປະໂຫຍດຂອງການຜະລິດ ແລະ ການນຳໃຊ້ (Value of Cultivation and Use, VCU)
3. **ການອະນຸຍາດທົດສອບແນວພັນພືດໃໝ່**
   - ການທົດສອບແນວພັນພືດໃໝ່ຂອງບັນດາພືດທີ່ຢູ່ ໃນບັນຊີແນວພັນພືດທີ່ໄດ້ຄັດເລືອກ, ສ້າງ ຢູ່ ສປປ ລາວ ແລະ ທົດສອບແນວພັນນຳເຂົ້າ ທີ່ຍັງບໍ່ທັນມີລາຍຊື່ໃນ ບັນຊີແນວພັນ ທີ່ໄດ້ອະນຸຍາດຜະລິດ ແລະ ເຮັດທຸລະກິດ;
   - ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ຕ້ອງການທົດສອບແນວພັນພືດໃໝ່ ຕ້ອງປະກອບເອກະສານຕາມຫຼັກວິຊາການ ເພື່ອຂໍທົດສອບແນວພັນພືດໃໝ່ ທີ່ກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້.
   - ໃນກໍລະນີນັກປັບປຸງພັນເປັນຜູ້ທົດສອບເອງຕ້ອງດຳເນີນຕາມຂັ້ນຕອນການທົດສອບ ຂອງກະຊວງກະສິກຳ ແລະ ປ່າໄມ້ ວາງອອກ ຫຼືເຊັນສັນຍາຮ່ວມກັບໜ່ວຍງານທົດສອບທີ່ຖືກຮັບຮູ້ຕາມທີ່ໄດ້ກຳນົດໃນ ມາດຕາ **16** ຂອງຂໍ້ຕົກລົງສະບັບນີ້;

**ມາດຕາ 12. ການຜະລິດແນວພັນພືດໃໝ່**

ການຜະລິດແນວພັນພືດໃໝ່ແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງໜ່ວຍງານວິຊາການ ທີ່ເຮັດໜ້າທີ່ຮັບຜິດຊອບໃນການຜະລິດແນວພັນ ເພື່ອຮັກສາໄວ້ລັກສະນະທາງກຳມະພັນໂດຍໃຫ້ຖືກຕ້ອງຕາມແນວພັນພືດ, ແນວພັນພືດທີ່ຂະຫຍາຍພັນດ້ວຍເມັດ ແລະ ຊິ້ນສ່ວນລຳຕົ້ນ ສາມາດປະຕິບັດດັ່ງນີ້:

1. **ການຜະລິດເມັດພັນພືດ ໂດຍທົ່ວໄປແມ່ນການຜະລິດຕາມ 4 ລຸ້ນເມັດພັນ.**
   ການຜະລິດເມັດພັນແຕ່ລະລຸ້ນ ຊຶ່ງເລີ່ມຈາກ ເມັດພັນບໍລິສຸດ (Breeder Seed), ເມັດພັນພື້ນຖານ(ລຸ້ນ1)(Foundation Seed), ເມັດພັນຈົດທະບຽນ (ລຸ້ນ2) (Registration Seed) ແລະ ເມັດພັນຢັ້ງຢືນ (ລຸ້ນ3) (Certified Seed) ໂດຍແມ່ນ ກະຊວງ ກະສິກຳ ແລະ ປ່າໄມ້ ກຳນົດອອກ,
2. **ການຜະລິດແນວພັນໄມ້ໃຫ້ໝາກ, ໄມ້ປະດັບ ແລະ ພືດອື່ນໆ.**
   ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ຜະລິດແນວພັນໄມ້ໃຫ້ໝາກ, ໄມ້ປະດັບ ແລະ ພືດອື່ນໆ ດ້ວຍຊິ້ນສ່ວນຂະຫຍາຍພັນ ຕ້ອງປະຕິບັດຕາມຫຼັກວິຊາການ ທີ່ ກະຊວງ ກະສິກຳ ແລະ ປ່າໄມ້ກຳນົດອອກ.

## ໝວດທີ 2
## ການຮັບຮອງແນວພັນພືດໃໝ່

**ມາດຕາ 13. ການຮັບຮອງແນວພັນພືດໃໝ່**

ແນວພັນພືດໃໝ່ທີ່ໄດ້ຜ່ານການຄົ້ນຄວ້າທົດລອງ ຢູ່ ສປປ ລາວ ຕ້ອງໄດ້ຮັບຮອງ ຈາກກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້.

**ມາດຕາ 14. ເງື່ອນໄຂໃນການຮັບຮອງແນວພັນພືດໃໝ່**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງທີ່ຈະຮັບຮອງແນວພັນພືດໃໝ່ ມີເງື່ອນໄຂດັ່ງນີ້:

1. ຜົນໄດ້ຮັບຂອງການທົດສອບ ຈາກໜ່ວຍງານທົດສອບແນວພັນພືດໃໝ່;
2. ຜົນໄດ້ຮັບຈາກການທົດສອບ ການຜະລິດໃນພື້ນທີ່ກວ້າງ, ເປັນທີ່ຍອມຮັບ ແລະ ໄດ້ຮັບການຢັ້ງຢືນຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ;
3. ຜົນການຄົ້ນຄວ້າພິຈາລະນາຮັບຮອງແນວພັນພືດໃໝ່ ຈາກກອງປະຊຸມສະພາວິທະຍາສາດເຕັກນິກ ກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 15. ການພິຈາລະນາຮັບຮອງແນວພັນພືດໃໝ່**

ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາຮັບຮອງແນວພັນພືດໃໝ່ ຫຼືປະຕິເສດ ພາຍໃນກຳນົດ 15 ວັນ ໃນວັນລັດຖະການ ນັບແຕ່ມື້ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 16. ໜ່ວຍງານຄຸ້ມຄອງການທົດສອບແນວພັນພືດໃໝ່**

ແມ່ນໜ່ວຍງານໜຶ່ງ ທີ່ຂຶ້ນກັບກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ທົບທວນຄືນຄຳຮ້ອງ ແລະ ຄົ້ນຄວ້າພິຈາລະນາ ເພື່ອຮັບຮອງແນວພັນພືດໃໝ່;
2. ຄຸ້ມຄອງກວດກາ ການທົດສອບຄວາມແຕກຕ່າງ, ຄວາມສະໝ່ຳສະເໝີ ແລະ ຄວາມຄົງຕົວຂອງພືດ;
3. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 17. ການຕັ້ງຊື່ແນວພັນພືດໃໝ່**

ແນວພັນພືດໃໝ່ ຈະຕ້ອງຕັ້ງຊື່ເໝາະສົມ, ຈະແຈ້ງ, ບໍ່ຊ້ຳກັບຊື່ແນວພັນພືດຊະນິດດຽວກັນ ຫຼືຊະນິດໃກ້ຄຽງກັນ ໃນ ສປປ ລາວ ຫຼື ຕ່າງປະເທດ.

## ໝວດທີ 3
## ການຈົດທະບຽນແນວພັນພືດ

**ມາດຕາ 18. ການຈົດທະບຽນແນວພັນພືດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ມີຈຸດປະສົງ ເຮັດການຜະລິດ ແລະທຸລະກິດ ແນວພັນພືດໃນ ສປປ ລາວ ຕ້ອງຈົດທະບຽນ ນຳກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 19. ເງື່ອນໄຂຂອງການຈົດທະບຽນ**

1. ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ຂໍຈົດທະບຽນແນວພັນພືດ ຕ້ອງໄດ້ຮັບໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້.
2. ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາການຈົດທະບຽນ ຫຼື ປະຕິເສດການຈົດທະບຽນ ພາຍໃນກຳນົດ 15 ວັນໃນວັນລັດຖະການນັບແຕ່ວັນໄດ້ຮັບໃບຄຳຮ້ອງເປັນຕົ້ນໄປ.
3. ໃນກໍລະນີແນວພັນພືດນຳເຂົ້າມາເພື່ອເຮັດການຄົ້ນຄວ້າທົດລອງ, ຊ່ວຍເຫຼືອ, ຂອງຂັວນ ແລະ ແລກປ່ຽນ ຕ້ອງໄດ້ຈົດທະບຽນຈາກປະເທດຕົ້ນທາງ ແລະແຈ້ງໃຫ້ກົມປູກຝັງຊາບ ເພື່ອກວດກາໃຫ້ຖືກຕ້ອງຕາມລະບຽບການນຳເຂົ້າແນວພັນພືດ.

4. ໃບທະບຽນແນວພັນພືດ ຊຶ່ງອອກໃຫ້ໂດຍ ກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້ ມີອາຍຸ 2 ປີ.
5. ໃບທະບຽນແນວພັນພືດ ຈະຖືກຖອນກ່ອນໝົດອາຍຸ ການນຳໃຊ້ໂດຍກົມປູກຝັງ, ກະຊວງ ກະສິກຳ ແລະປ່າໄມ້ ໃນກໍລະນີມີການລະເມີດຕໍ່ຂໍ້ຕົກລົງສະບັບນີ້, ລວມທັງແນວພັນພືດບໍ່ໄດ້ມາດຕະຖານ ຕາມລະບຽບຄຸ້ມຄອງ ແລະ ນຳໃຊ້ແນວພັນ ແລະ ເມັດພັນພືດ ສຳລັບການປູກຝັງໃນ ສປປ ລາວ.

**ມາດຕາ 20. ສິດ ແລະ ໜ້າທີ່ຂອງໜ່ວຍງານຄຸ້ມຄອງແນວພັນພືດ**

ໜ່ວຍງານຄຸ້ມຄອງແນວພັນພືດ ເປັນໜ່ວຍງານໜຶ່ງ ຢູ່ພາຍໃຕ້ການຄຸ້ມຄອງຂອງກົມປູກຝັງ,ກະຊວງ ກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່:

- ຄົ້ນຄວ້າ ແລະ ພິຈາລະນາເອກະສານຂໍຈົດທະບຽນ ເພື່ອສະເໜີໃຫ້ກົມຈົດທະບຽນແນວພັນພືດ;
- ກວດກາ, ຕິດຕາມ ແລະ ປະເມີນຄືນ ການຈົດທະບຽນແນວພັນພືດຢ່າງເປັນປົກກະຕິ
- ສະເໜີຮັບຮອງເອົາສະຫຼາກແນວພັນພືດ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 4
## ການກວດກາຄຸນນະພາບແນວພັນພືດ

**ມາດຕາ 21. ຄຸນນະພາບແນວພັນພືດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ດຳເນີນການຜະລິດ ແລະທຸລະກິດແນວພັນພືດ ຕ້ອງຮັບປະກັນຄຸນນະພາບ ຕາມມາດຕະຖານທີ່ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 22. ມາດຕະຖານຄຸນນະພາບແນວພັນພືດ**

ມາດຕະຖານຄຸນນະພາບແຕ່ລະຊະນິດແນວພັນພືດມີ:

- ມາດຕະຖານຂອງກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ;
- ມາດຕະຖານຂອງພາກພື້ນ ແລະ ສາກົນ.

## ພາກທີ III
## ການຄຸ້ມຄອງ-ອະນຸລັກແຫຼ່ງເຊື້ອພັນພືດ

**ມາດຕາ 23. ການຄຸ້ມຄອງແຫຼ່ງເຊື້ອພັນພືດ**

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີໜ້າທີ່ຄຸ້ມຄອງແຫຼ່ງເຊື້ອພັນພືດ;
2. ແຫຼ່ງເຊື້ອພັນພືດ ຢູ່ໃນຂອບເຂດຄຸ້ມຄອງຂອງກະຊວງ ກະສິກຳ ແລະ ປ່າໄມ້, ການຂຸດຄົ້ນນຳໃຊ້ ຕ້ອງໄດ້ຮັບອະນຸຍາດ ຈາກ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ, ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 24. ການອະນຸລັກແຫຼ່ງເຊື້ອພັນພືດ**

1. ກະຊວງ ກະສິກຳ ແລະ ປ່າໄມ້ ສະໜັບສະໜູນການອະນຸລັກແນວພັນພືດ ເພື່ອພັດທະນາ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ;

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີໜ້າທີ່ອະນຸລັກແນວພັນພືດ ຕາມກົດໝາຍທີ່ກ່ຽວຂ້ອງ;
3. ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ, ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບຂຶ້ນບັນຊີລາຍຊື່ແນວພັນພືດທີ່ຕ້ອງອະນຸລັກ.

**ມາດຕາ 25. ການແລກປ່ຽນແນວພັນ ແລະ ເຊື້ອພັນພືດ**

1. ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ມີສິດແລກປ່ຽນແນວພັນພືດພາຍໃນປະເທດ ເພື່ອຮັບໃຊ້ເຂົ້າໃນການຄົ້ນຄວ້າ, ທົດລອງ, ການຜະລິດ ແລະ ດຳເນີນທຸລະກິດແນວພັນພືດ ແຕ່ຕ້ອງໄດ້ຮັບອະນຸຍາດ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້;
2. ການແລກປ່ຽນເຊື້ອພັນພືດກັບສາກົນຕ້ອງໄດ້ຮັບການຮັບຮອງຈາກໜ່ວຍງານກວດກາເຊື້ອພັນພືດ ຊຶ່ງໄດ້ຮັບການອະນຸຍາດ ຈາກກະຊວງ ກະສິກຳ ແລະ ປ່າໄມ້;
3. ໃນກໍລະນີ ແນວພັນພືດທີ່ບໍ່ໄດ້ຂຶ້ນບັນຊີລາຍຊື່ ໂດຍມີຈຸດປະສົງ ເພື່ອການຄົ້ນຄວ້າທົດລອງ ແລະທົດສອບຕ້ອງປະຕິບັດດັ່ງນີ້:
   - ໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ (**Phytosanitary Certificate**);
   - ໃບຢັ້ງຢືນ ກ່ຽວກັບ ມາດຕະຖານການເຄື່ອນຍ້າຍແນວພັນພືດ (Standard Material Transfer Agreement, SMTA) ຂອງປະເທດພາຄີ ແລະ ບໍ່ແມ່ນພາຄີ (Material Transfer Agreement, MTA)
   - ໃບອະນຸຍາດນຳເຂົ້າແນວພັນພືດ;
4. ໜ່ວຍງານກວດກາເຊື້ອພັນພືດ ແມ່ນໜ່ວຍງານໜຶ່ງ ຂຶ້ນກັບສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ.

## ພາກທີ IV
## ທຸລະກິດແນວພັນພືດ

**ມາດຕາ 26. ເງື່ອນໄຂການດຳເນີນທຸລະກິດແນວພັນພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງ ເພື່ອເຮັດທຸລະກິດແນວພັນພືດ ຕ້ອງປະກອບເອກະສານດັ່ງນີ້:

1. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດການຜະລິດແນວພັນພືດ;
2. ສະຖານທີ່ດຳເນີນທຸລະກິດ ແລະ ພື້ນຖານໂຄງລ່າງວັດຖຸເຕັກນິກ ທີ່ກ່ຽວກັບການດຳເນີນທຸລະກິດແນວພັນພືດ;
3. ວິຊາການທີ່ມີຄວາມຮູ້ຄວາມສາມາດທີ່ແນ່ນອນດ້ານການຜະລິດແນວພັນພືດ;
4. ໃບທະບຽນວິສາຫະກິດ;
5. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້;
6. ໃບທະບຽນແນວພັນພືດ.

**ມາດຕາ 27. ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ແນວພັນພືດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ນຳເຂົ້າ ແລະ ສົ່ງອອກ ແນວພັນພືດຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

**ການນຳເຂົ້າແນວພັນພືດ:**

1. ແນວພັນພືດທີ່ມີໃນບັນຊີລາຍຊື່ແນວພັນພືດທີ່ອະນຸຍາດຜະລິດ;
2. ໃບທະບຽນແນວພັນພືດ ຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ;

3. ໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ;

**<u>ການສົ່ງອອກແນວພັນພືດ:</u>**

1. ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ມີສິດສົ່ງອອກແນວພັນພືດ ທີ່ບໍ່ນອນຢູ່ໃນບັນຊີລາຍຊື່ແນວພັນພືດຫວງຫ້າມ;
2. ໃບອະນຸຍາດນຳເຂົ້າຈາກ ປະເທດປາຍທາງ;
3. ໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ.

**ມາດຕາ 28. ການເກັບຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ**

ຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ ສຳລັບໃບທະບຽນ ແລະ ໃບອະນຸຍາດຕ່າງໆ ກ່ຽວກັບແນວພັນພືດ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ພາກທີ V
## ການຄຸ້ມຄອງ ແລະ ກວດກາແນວພັນພືດ

**ມາດຕາ 29. ການຄຸ້ມຄອງ ແລະ ກວດກາແນວພັນພືດ**

ອົງການຄຸ້ມຄອງ ແລະ ກວດກາແນວພັນພືດ ແມ່ນຂະແໜງການກະສິກຳ ແລະ ປ່າໄມ້ ປະກອບດ້ວຍ:

- ກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້;
- ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ;
- ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ;
- ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ.

ຂະແໜງການຄຸ້ມຄອງ ແລະ ກວດກາແນວພັນພືດສາມາດແຕ່ງຕັ້ງໜ່ວຍງານກວດກາ ຊຶ່ງປະກອບການດ້ວຍພະນັກງານວິຊາການ ທີ່ໄດ້ຮັບການຝຶກອົບຮົມດ້ານເຕັກນິກວິຊາການຈາກກົມປູກຝັງ.

**ມາດຕາ 30. ການກວດກາແນວພັນພືດ**

ການກວດກາແນວພັນພືດ ແມ່ນການຕິດຕາມກວດກາການເຄື່ອນໄຫວ ກ່ຽວກັບການຜະລິດ, ການທົດສອບ, ການຮັບຮອງ, ການຈົດທະບຽນ, ການອະນຸລັກແຫຼ່ງເຊື້ອພັນພືດ, ການດຳເນີນທຸລະກິດດ້ານແນວພັນພືດ ແລະ ການກວດກາຄຸນນະພາບເມັດພັນພືດ.

**ມາດຕາ 31. ຮູບການກວດກາແນວພັນພືດ**

ການກວດກາແນວພັນພືດມີ 3 ຮູບການດັ່ງນີ້:

1. **ການກວດກາຕາມປົກກະຕິ** ແມ່ນການກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຊຶ່ງໄດ້ແບ່ງຂັ້ນຄຸ້ມຄອງທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.
2. **ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ** ແມ່ນການກວດກາ ເມື່ອມີຄວາມຈຳເປັນໂດຍແຈ້ງເປົ້າໝາຍຜູ້ຖືກກວດກາຮູ້ລ່ວງໜ້າ.
3. **ການກວດກາແບບກະທັນຫັນ** ແມ່ນການກວດກາສະເພາະກິດຂອງບັນຫາໃດໜຶ່ງເມື່ອຫາກເຫັນວ່າມີຄວາມຈຳເປັນ ແຕ່ການກວດການັ້ນແມ່ນດຳເນີນຢ່າງຮີບດ່ວນໂດຍບໍ່ແຈ້ງໃຫ້ເປົ້າ ໝາຍຖືກກວດກາຮູ້ລ່ວງໜ້າ.

**ມາດຕາ 32. ສິດ ແລະ ໜ້າທີ່ ຂອງກົມປູກຝັງ**

ໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງແນວພັນພືດ ກົມປູກຝັງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ແນວທາງ, ແຜນຍຸດທະສາດ, ແຜນນະໂຍບາຍຕ່າງໆ, ນິຕິກຳ ທີ່ກ່ຽວຂ້ອງຂອງ ສປປ ລາວ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ກ່ຽວຂ້ອງຊຶ່ງ ສປປ ລາວ ເປັນພາຄີ ໃຫ້ກາຍເປັນແຜນງານ, ໂຄງການລະອຽດ ກ່ຽວກັບການຜະລິດ, ການເຮັດທຸລະກິດ, ການຮັບຮອງ, ການຈົດທະບຽນ ແລະ ການຄຸ້ມຄອງຄຸນນະພາບແນວພັນພືດໃນຂອບເຂດທົ່ວປະເທດ;
2. ກຳນົດຫຼັກການ, ລະບຽບການ, ຄຳສັ່ງ, ຄຳແນະນຳ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ແນວພັນພືດ ໃຫ້ມີປະສິດທິຜົນສູງ;
3. ໂຄສະນາ, ເຜີຍແຜ່, ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງແນວພັນພືດ ແລະ ປົດບັນຍັດ ຂອງສົນທິສັນຍາສາກົນທີ່ກ່ຽວຂ້ອງຊຶ່ງ ສປປ ລາວ ເປັນພາຄີ;
4. ຮັບຮອງ, ຈົດທະບຽນ ແນວພັນພືດ ແລະ ກວດກາຄຸນນະພາບແນວພັນພືດ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງຕາມການມອບໝາຍຂອງການຈັດຕັ້ງຂັ້ນເທິງຂອງຕົນ;
5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດການຄຸ້ມຄອງ, ຕິດຕາມ, ກວດກາ ແນວພັນພືດ ເປັນຕົ້ນແມ່ນການຮັບຮອງ, ການຈົດທະບຽນ, ການຄຸ້ມຄອງຄຸນນະພາບ, ການຜະລິດ ແລະ ການດຳເນີນທຸລະກິດແນວພັນພືດ ຢູ່ພາຍໃນຂອບເຂດທົ່ວປະເທດ;
6. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຄຸ້ມຄອງແນວພັນພືດ;
7. ສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງແນວພັນພືດ ໃນຂອບເຂດທົ່ວປະເທດ ແລະລາຍງານໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 33. ສິດ ແລະ ໜ້າທີ່ ຂອງສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ**

ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງແນວພັນພືດ, ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ແນວທາງ, ແຜນຍຸດທະສາດ, ແຜນນະໂຍບາຍຕ່າງໆ, ນິຕິກຳ ທີ່ກ່ຽວຂ້ອງຂອງ ສປປ ລາວ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ກ່ຽວຂ້ອງ ຊຶ່ງ ສປປ ລາວ ເປັນພາຄີ ໃຫ້ກາຍເປັນແຜນງານ, ໂຄງການລະອຽດ ກ່ຽວກັບການອະນຸລັກແຫຼ່ງເຊື້ອພັນພືດ, ຄົ້ນຄ້ວາທົດລອງແນວພັນພືດໃໝ່ຢູ່ໃນຂອບເຂດທົ່ວປະເທດ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງນຳໃຊ້ແນວພັນພືດ ເປັນຕົ້ນແມ່ນ ການອະນຸລັກແຫຼ່ງເຊື້ອພັນພືດ ແລະ ການຄົ້ນຄ້ວາທົດລອງ ແນວພັນພືດ;
2. ຄົ້ນຄວ້າວິທະຍາສາດເຕັກນິກ ແລະ ຈັດຕັ້ງປະຕິບັດດ້ານການອະນຸລັກແຫຼ່ງເຊື້ອພັນພືດ ແລະ ການຄົ້ນຄວ້າທົດລອງແນວພັນພືດ ແລະ ຍົກລະດັບວິຊາການ ດ້ານການຄົ້ນຄ້ວາທົດລອງແນວພັນພືດ;
3. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບການອະນຸລັກ ແລະ ການຄົ້ນຄວ້າທົດລອງ ແນວພັນພືດ;
4. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານການອະນຸລັກ ແລະ ການຄົ້ນຄ້ວາທົດລອງແນວພັນພືດໃໝ່ ໃນທົ່ວປະເທດໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 34. ສິດ ແລະໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ**

ໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງແນວພັນພືດ, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນ ມີສິດໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍຂໍ້ຕົກລົງ ກ່ຽວກັບ ວຽກງານຄຸ້ມຄອງ ແລະ ນຳໃຊ້ ແນວພັນພືດ ໃຫ້ເປັນແຜນງານ, ໂຄງການເພື່ອຈັດຕັ້ງປະຕິບັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາເຜີຍແຜ່ ລະບຽບກົດໝາຍ, ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງແນວພັນພືດ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງແນວພັນພືດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ;
4. ອອກໃບອະນຸຍາດ ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແນວພັນພືດທີ່ໄດ້ຮັບການຈົດທະບຽນຖືກຕ້ອງຈາກກົມປູກຝັງ;
5. ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງແນວພັນພືດ
6. ສະຫຼຸບລາຍງານກ່ຽວກັບການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງແນວພັນພືດ ພາຍໃນ ແຂວງ, ນະຄອນ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກຳນົດໄວ້ໃນລະບຽບກົດໝາຍ

**ມາດຕາ 35. ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ**

ໃນການຄຸ້ມຄອງແນວພັນພືດ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານມີສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ, ແຈ້ງການ ແລະ ຄຳແນະນຳກ່ຽວກັບການຄຸ້ມຄອງແນວພັນພືດ;
2. ຊຸກຍູ້, ຕິດຕາມ, ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງແນວພັນພືດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
3. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງພາຍໃນເມືອງ, ເທດສະບານ ໃນການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການຄຸ້ມຄອງແນວພັນພືດ;
4. ປະຕິບັດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ ໃນລະບຽບກົດໝາຍ.

**ມາດຕາ 36. ສິດ ແລະ ໜ້າທີ່ ຂອງຄະນະກວດກາແນວພັນພືດ**

ຄະນະກວດກາແນວພັນພືດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ແຈ້ງໃຫ້ຜູ້ຜະລິດ ແລະ ເຮັດທຸລະກິດກ່ຽວກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້;
2. ໃນການກວດກາແນວພັນພືດ ພະນັກງານກວດກາ ຕ້ອງສະແດງໃບແຕ່ງຕັ້ງຕໍ່ຜູ້ຜະລິດ ແລະ ເຮັດທຸລະກິດແນວພັນພືດ ຕ້ອງປະຕິບັດຢ່າງເໝາະສົມ ແລະ ເຄັ່ງຄັດ ຕາມລະບຽບກົດໝາຍ;
3. ກວດກາເປັນແຕ່ລະໄລຍະ ຕາມຄວາມເໝາະສົມ ສຳລັບທຸກພາກສ່ວນທີ່ກ່ຽວຂ້ອງກັບການ ຜະລິດ ການເຮັດທຸລະກິດ ແລະ ການຄຸ້ມຄອງຄຸນນະພາບ ເພື່ອໃຫ້ຖືກຕ້ອງຕາມລະບຽບ ກົດໝາຍ ໃນ ສປປ ລາວ;
4. ກວດກາກ່ຽວກັບໃບຢັ້ງຢືນການຜະລິດ, ການເຮັດທຸລະກິດ, ໃບຮັບຮອງແນວພັນພືດໃໝ່, ໃບຮັບຮອງຄຸນນະພາບ ຫຼື ເອກະສານອື່ນໆ ຫຼື ໃບອະນຸມັດຈາກທາງການ ຫຼື ຄຳສັ່ງພາຍ ໃຕ້ຂໍ້ຕົກລົງສະບັບນີ້;

5. ຕິດຕາມ, ກວດກາ ການຜະລິດແນວພັນພືດ ໃນພື້ນທີ່ການຜະລິດ ເຊິ່ງເລີ່ມແຕ່ປູກຈົນຮອດເກັບກ່ຽວ ແລະການເກັບຮັກສາ;
6. ສຸ່ມເກັບຕົວຢ່າງແນວພັນພືດ ຫຼື ວັດຖຸໃດໜຶ່ງ ທີ່ພົວພັນກັບແນວພັນພືດ ເພື່ອທົດສອບ ຄຸນນະພາບ;
7. ກວດກາແນວພັນພືດໃນພາຊະນະບັນຈຸ, ສະຫຼາກ ຫຼືເອກະສານອື່ນໆທີ່ກ່ຽວຂ້ອງກັບແນວພັນພືດ.
8. ຢຶດແນວພັນພືດ, ວັດຖຸອຸປະກອນ, ເອກະສານ, ບົດບັນທຶກ ຫຼື ເອກະສານອື່ນໆທີ່ບໍ່ຖືກຕ້ອງ, ທີ່ມີການລະເມີດລະບຽບການຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
9. ປະຕິບັດຕົນໃຫ້ເໝາະສົມຕາມໜ້າທີ່ ແລະ ຄວາມຮັບຜິດຊອບ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 37. ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ**

ບັນດາຂະແໜງການ ແລະ ພາກສ່ວນອື່ນມີສິດ ແລະ ໜ້າທີ່ຄຸ້ມຄອງແນວພັນພືດຕາມພາລະບົດບາດຂອງຕົນ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 38. ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ແລະຜູ້ປະກອບການທັງພາຍໃນ ແລະຕ່າງ ປະເທດມີການກະທຳດັ່ງນີ້:

1. ດຳເນີນທຸລະກິດແນວພັນພືດປອມ ແລະແນວພັນທີ່ບໍ່ຮັບປະກັນຄຸນນະພາບ;
2. ດຳເນີນການຜະລິດແລະທຸລະກິດແນວພັນພືດທີ່ບໍ່ມີໃນບັນຊີລາຍຊື່ແນວພັນພືດໃຫ້ຜະລິດ;
3. ທຳລາຍ, ລັກລອບ, ສົ່ງອອກແນວພັນ ແລະເຊື້ອພັນພືດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງກະສິກຳ ແລະ ປ່າໄມ້;
4. ທົດລອງພະຍາດ ແລະແມງໄມ້ ຢູ່ ເຂດຜະລິດແນວພັນພືດ;
5. ກີດກັ້ນການຄົ້ນຄວ້າ, ທົດລອງ, ການຜະລິດ ແລະດຳເນີນທຸລະກິດແນວພັນພືດທີ່ໄດ້ຮັບອະນຸຍາດຈາກ ກະຊວງ ກະສິກຳ ແລະ ປ່າໄມ້;
6. ນຳເຂົ້າ, ຜະລິດ ແລະດຳເນີນທຸລະກິດແນວພັນພືດ ທີ່ກໍ່ໃຫ້ເກີດຄວາມເສຍຫາຍໃນການຜະລິດ ແລະສຸຂະພາບຂອງປະຊາຊົນ, ສິ່ງແວດລ້ອມ ແລະລະບົບນິເວດ;
7. ກຳນົດມາດຕະຖານຄຸນນະພາບ, ໂຄສະນາຄຸນນະພາບຂອງແນວພັນພືດທີ່ບໍ່ມີຄວາມຈິງ ຫຼື ເກີນຄວາມເປັນຈິງ ຊຶ່ງເຮັດໃຫ້ຜູ້ອື່ນຫຼົງເຊື່ອໃນຄຸນນະພາບຂອງແນວພັນພືດ.

**ມາດຕາ 39. ຂໍ້ຫ້າມສຳລັບພະນັກງານຄຸ້ມຄອງ, ກວດກາແນວພັນພືດ**

ນອກຈາກຂໍ້ຫ້າມທີ່ໄດ້ກຳນົດໃວ້ໃນມາດຕາ 38 ຂອງຂໍ້ຕົກລົງສະບັບນີ້, ຫ້າມພະນັກງານກວດກາແນວພັນພືດ ມີການກະທຳດັ່ງນີ້:

1. ສວຍໃຊ້ສິດ ແລະ ໜ້າທີ່ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ກົດໜ່ວງຖ່ວງດຶງ, ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະບຸກຄົນ;
2. ເປີດເຜີຍຄວາມລັບຂອງລັດ ຫຼືທາງລັດຖະການ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບ ຕໍ່ວຽກງານຄຸ້ມຄອງແນວພັນພືດ;

3. ເມີນເສີຍຕໍ່ລະບຽບຫຼັກການໃນການຄຸ້ມຄອງແນວພັນພືດ ແລະ ແກ້ໄຂວຽກງານໂດຍບໍ່ຖືກຕ້ອງຕາມລະບຽບຫຼັກການ.
4. ເພີ່ມ ຫຼືຫຼຸດຄ່າທຳນຽມ, ຄ່າບໍລິການ ແລະການນຳໃຊ້ ລາຍຮັບຈາກການຄຸ້ມຄອງແນວພັນພືດຕາມລຳພັງ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 40. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ນຳໃຊ້ແນວພັນພືດ ຂອງຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມຄວາມເໝາະສົມ ແລະ ການກຳນົດ ຂອງກະຊວງ ກະສິກຳ ແລະ ປ່າໄມ້.

**ມາດຕາ 41. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ແລະການຈັດຕັ້ງກ່ຽວຂ້ອງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະຖືກຕັກເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ດຳເນີນທາງແພ່ງ ຫຼືອາຍາ ແລ້ວແຕ່ກໍລະນີໜັກ ຫຼືເບົາ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມປູກຝັງ, ກະຊວງສິກຳ ແລະ ປ່າໄມ້ ເປັນເຈົ້າການຜັນຂະຫຍາຍ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ.

**ມາດຕາ 43. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ ແລະ ບົດບັນຍັດໃດໆ ທີ່ຂັດກັບ ຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

**ດຣ. ເພັດ ພົມພິພັກ**